**<u>ລາວເສຣີຊົນ ຄົ້ນຫາຄວາມຈິງ</u>**

ຕະກຸນກະແມ່ນລາວ ເພາະແມ່ເຂົາມາຈາກ ພາກຕາເວັນອອກສຽງເໜືອຂອງ ປະເທດໄທ

ແມ່ພຣະເຈົ້າຕາງສິນ ກະແມ່ນລາວ ຊື່ ນົກອ້ຽງ ມີແຕ່ອີ່ຕັກກະແກນຂາຍຄວາມເປັນລາວ ມັນມາປາຣີ ທ່ານສຸຣິຍາ ປຣະວົງວຽງຄຳນັກຊາດນິຍົມ 100% ຖາມເປັນພາສາລາວກັບຕອບວ່າ ບໍ່ຮູ້ເຣື້ອງ (ໂຊກດີທີ່ທ່ານສຸຣິຍາ ບໍ່ເວົ້າພາສາຝຣັ່ງ ຫຼືອັງກິດຕອກໜ້າມຶງລະ ຊຶ່ງເປັນພາສາທີ່ເຂົາ ປາກໄດ້ຄືພາສາລາວ ພາສາແມ່ຂອງນັ້ນລະ) ອີ່ທ່ານຶງເອີຍລົງທ້າຍດ້ວຍຄຳເວົ້າຄຳຈາ ພາສາລາວ ອອ້ຍຕອ້ຍ ຊົນຊາດເຊື້ອລາວກວ່າ 70 ລ້ານຄົນປະມານອີ່ນີ້ດ້ວຍ

ຂໍເຊີນຊົມຄຳເວົ້າພາສາອານານິຄົມຂອງອີ່ນີ້ ໃນຂ່າວເສຣີຊົນນີ້- ອີ່ຕັກກະແຕນລາວປາຣີ ຫລັງ ຈາກຊາວລາວທົ່ວໂລກ ປອ້ຍດ່າປະຫວ້ງການຂາຍຄວາມເປັນຂອງອີ່ສິບເວີໜ້າແຫ້ລຕັກກະແຕນ ມັນໂສມໜ້າແບບດຽວກັບຄົນພັກ ຄມນ ລາວແດງ ບັກໜ້າແດ້ເມືອງໄຊງແທ້ໆເນີ-ທີ່ປາຣີນີ້ໆຜ່ານ ມານີ້ເອງ ລາວທີ່ເປັນຊາດນິຍົມເຕັມຕົວ 100%ນັ້ນ ອອກໂຄງການໄຊ້ສິດແບບບໍ່ເຄີຍມີມາກ່ອນ

ເຊັ່ນທ່ານໂພສີ ສັກດາ ອອກໜ້າອີ່ນີ້ວ່າ ຄວາມໄຮ້ສາຣະຂອງອີ່ຕັກກະແຕນເຊື້ອຊາດລາວ ແຕ່ ມັນປາກພາສາລາວບໍ່ໄດ້(ປາກໄດ້ ແຕ່ມັນຢາກດັບຫູດັບຕາປາກ ມັນຍົກຄວາມເປັນໄທຂຶ້ນມາລວງ ໂລກ ໂດຍມັນບໍ່ຍອມເຊົາຊະແຕກປາແດກປັ້ນເຂົ້າໜຽວໃສ່ປາກຂອງມັນ ຜູ້ຊຽນນີ້ຄືຜູ້ສລາດ ໜ້າ ເສັ່ງດາຍທີ່ຊາວລາວຜູ້ທີ່ບໍ່ເຫັນຄວາມສຳຄັນຂອງຊາດ ທີ່ມີຢູ່ໃຫ້ຄວາມສົນໃຈໄປສນັບສນູນມະໜຸດ ສອງໜ້າ ທີ່ສະແດງຕົນເປັນໄທຍ ຂໍເພີ້ມອີກດົນປານໃດພວກໜ້າໃວ້ຫລັງຫລອກຈຳພວກນີ້ ຈະ ຕື່ນຕົວ ທ່ານນາຣົງ ສິນຄອນ ຊ້ຳພັດຕອກໜ້າຜາກອີ່ໜ້ານີ້ ແບບມ້ວນທ້າຍດ້ວຍຄຳທີ່ວ່າອີ່ຄວາຍ ລືມຕົນ ຄຳຕອບຂອງທ່ານໂພສີ ນັ້ນກໍ່ເຫັນວ່າພໍເຂົ້າໃຈໄດ້ໃນເຫດຜົນຂອງບຸກຄົນ ທີ່ລືມຊາດກຳ ເນີດຂອງຕົນ ແຕ່ເຖິງຢ່າງໃດກໍດີ ຂ້າພະເຈົ້າຄິດວ່າຄວາມຈິງກໍ່ບໍ່ໜີຈາກຄວາມຈິງໄປໄດ້ ຄວາມ ວ່າກິນເຂົ້າໜຽວຈ້ຳປາແດກນັ້ນ ຄົງຈະເປັນອາຫານອັນແສນເຮີດຂອງຄອບຄົວອີ່ນາງຕັກກະແຕນ ເຊັ່ນດຽວກັນ ເພາະອີ່ນີ້ພອ້ມທັງຄອບຄົວນັ້ນມີຕົ້ນກຳເໜີດໃນຈັງຫວັດໂຄຣາຊ ຈຶ່ງບອກໄດ້ວ່າ ລາວ 100% ສະນັ້ນຜູ້ທີ່ມີສາຍຍາວ່າ ອີ່ຕັກກະແຕນນັ້ນເປັນຄົນຕື່ນເງົາຕົນເອງຈົ່ນເກີນໄປ ຈົ່ນ ກະທັ້ງບໍ່ຍອມຮັບຄວາມຈິງວ່າຕົວເອງເປັນໝູ ຫຼື ເປັນເຈັ່ງກັນແທ້ ທ້າຍສຸດຂໍໃຫ້ຊາວລາວທຸກ ຊົນຊັ້ນ ຈົ່ງຮັບຮູ້ໃນຄວາມປະຕິເສດຄວາມເປັນລາວຈອງຫອງ ອີ່ຕັກກະແຕນຜູ້ທີ່ຄອງຕຳແໜ່ງ ອັນນີ້ຄືຄວາຍລືມຕົນ ນີ້ເນີ

ສ່ວນພວກຂີ້ທູດລາວແດງທີ່ປາຣີ ພາຍໃຕ້ການເປັນທົວຂອງບັກສຸດສາຍຄອນ ປະຖຸມວົງ ມັນ ພາກັນເປັນອຳມະພາດຕາຍແລ້ວມິດໄປເລີຍແທ້ໆ ຄິດມາແລ້ວຮອດບອ່ນນີແລ້ວ ພວກກູຄຶດເຖິງ ໃຫ້ສຳພາດ ທີວີ arte-Info ໃນເວລາ 19ຸ45ຸ20-00 ຂອງວັນທີ-30-6-2003-ເປັນພາສາຝຣັ່ງ ເສສ ຈົນຜູ້ຈັດການຂ່າວນີ້ເຮັດ sous-titre ພາສາຝຣັ່ງເສສແທ້ແລະດັ່ງເດີມ

ອັນໜ້າຄວາມອັບອາຍຂາຍໜ້າໃຫ້ລາວທັງຊາດ ແຕ່ປານນັ້ນພວກ ຄມນ ລາວແດງຍັງບໍ່ມີບັນຫາ ເຕະບັກນີ້ ກັບ ປະເທດ ຢ່າງກະທັນຫັນ

ໃນ ສປປລ ເວລານີ້ ປະຊາຊົນ ຕອ້ງເປັນມະນຸດທີ່ມີເສຣີພາບເທົ່າທຽມກັນທຸກຄົນກັບຄົນພັກ ແລະ ອຳນາດສູງສຸດຂອງປະເທດນັ້ນເປັນຂອງປະຊາຊົນທັງຫລາຍ ບໍ່ແມ່ນແຕ່ເປັນຄົນພັກພວກເຈົ້າ ຄມນ ລາວແດງແຕ່ພວກດຽວເນີ ສະນັ້ນອຸດົມການປະຊາທິປະໄຕແລະຄວາມເປັນທັມ ຕາມຄວາມຕອ້ງການ ຂອງຊາວລາວທັງໂລກ ຕອ້ງຄວນຖືກນຳມາພິຈາຣະນາ ໃນສາຍຕາຂອງພວກຄອງເມືອງໃນເວລານີ້ ໃນສະຖານະການແຫ່ງການຮຽກຮອ້ງປະຊາທິປະໄຕ ແລະຄວາມເປັນທັມທາງສັງຄົມ ທາງເສຖກິດ ທາງການເມືອງ ທີ່ກຳລັງດຳເນີນໄປຢ່າງເຂັ້ມຂົນແລະກວ້າງຂວາງເປັນພິເສດນີ້ ສັງຄົມຜູ້ນຳ ຄມນ ຜດກ ເຈົ້າລາວແດງຄວນນຳປະກາດຄນະລາວພັດຖິ່ນຕ່າງແດນ-ລົງວັນທີ-1-1-09-ມາສຶກສາກັນ ຢ່າງຄົບຖວ້ນກະບວນຄວາມ ແລະຢ່າງເປີດເຜີຍກວ້າງຂວາງເປັນສາທາຣະນະ ເພື່ອທຳຄວາມເຂົ້າ ໃຈຄວາມໝາຍຂອງປະຊາທິປະໄຕແລະຄວາມເປັນທັມ ທີ່ກຳລັງຮຽກຮອ້ງກັນຢູ່ໃຫ້ຊັດເຈນ ເພື່ອ ສ້າງອຸດົມການຮວ່ມກັນໃນການເດີນໜ້າຕໍ່ໄປ ເປັນຫຍັງຈຶ່ງຈຳເປັນຕອ້ງສຶກສາ ປະກາດຄນະລາວ ພັດຖິ່ນຕ່າງແດນ ສບັບວັນທີ-1-? ຄຳຕອບຕົງໄປຕົງມາ ເພາະປະກາດສບັບດັ່ງກ່າວຄື ສັນຍາປະ ຊາຄົມ ແຫ່ງການເຣີ່ມຕົ້ນສັງຄົມປະຊາທິປະໄຕລາວ ເມື່ອແລກການປ່ຽນແປງການປົກຄອງ ຈາກ ຣະບອບ ຜດກ ຄມນ ພັກໂທນມາເປັນຣະບອບປະຊາທິປະໄຕຢ່າງແທ້ຈິງ ສັນຍາປະຊາຄົມດັ່ງ ກ່າວ ຈຶ່ງເປັນສະເໝືອນຮາກຖານ ຂອງຣະບອບປະຊາທິປະໄຕໃນສັງຄົມລາວ ຫາກປະຊາທິປະ ໄຕທີ່ເຮົາຮຽກຮອ້ງ ບໍ່ໄດ້ຍຶດໂຍງຢູ່ກັບຮາກຖານດັ່ງກ່າວ ມັນກໍ່ຈະກາຍເປັນປະຊາທິປະໄຕໄຮ້ຮາກ ທີ່ເປັນພຽງຂອງເລັ້ນຊຶ່ງນຳມາກ່າວອ້າງກັນ ເພື່ອແຍ່ງຊີງອຳນາດທາງການເມືອງເທົ່ານັ້ນເອງ

ສາຣະສຳຄັນຄວາມປະກາດຄນະລາວພັດຖິ່ນຕ່າງແດນສບັບວັນທີ-1-ອາຈສລຸບໄດ້ດັ່ງນີ້

1ຸ ເຫດຜົນຂອງຄວາມຕອ້ງການປ່ຽນແປງການປົກຄອງຈາກ ຜດກ ຄມນ ມີດັ່ງນີ້

(ກ) ພັກ ຄມນ ລາວແດງ ມີອຳນາດຢູ່ເໜືອກົດໝາຍເດີມ ຊຶ່ງແຕ່ງຕັ້ງຍາດຕິວົງພັກແລະຄົນ ສພ ໄຮ້ຄຸນຄວາມຮູ້ໃຫ້ດຳລົງຕຳແໜ່ງທີ່ສຳຄັນ ບໍ່ຊົງຟັງສຽງຊາວບ້ານ ປອ່ຍໃຫ້ຂ້າຣາຊການໄຊ້ ອຳນາດໜ້າທີ່ໃນທາງທຸຈຣິດ ມີການຮັບສິນບົນໃນການກໍ່ສ້າງແລະຊື້ຂອງໄຊ້ໃນຣາຊການ ຫາກຳ ໄລໃນການປ່ຽນເງີນ ຜ່ານເງີນຂອງປະເທດ ຍົກພວກເຈົ້າ ຄມນ ລາວແດງຂອງພວກເຂົາເອງ ຂຶ້ນໃຫ້ສິດທິພິເສດຫລາຍກວ່າຣາສດອນ ປະຊາຊົນສາມັນຊົນຖືກກົດຂີ່ຂົ່ມເຫັງ ຣາສດອນ ປົກຄອງໂດຍຂາດຫລັກວິຊາ ປອ່ຍໃຫ້ບ້ານເມືອງເປັນໄປຕາມຍະຖາກັມ

(ຂ) ຣັຖບານພັກ ຄມນ ບໍ່ໄດ້ປົກຄອງປະເທດເພື່ອປະຊາຊົນ ຕາມທີ່ຣັຖບານອື່ນໆ ໄດ້ກະ ທຳກັນ ສວ່ນພັກ ຄມນ ນີ້ໄດ້ຖືເອົາ ປຊຊ ເປັນທາດ ຊຶ່ງເອີ້ນກັນວ່າທາດພັກແນ່ ຂ້າພັກແນ່ ພວກນີ້ເປັນສັດເດັຽຣະສານບໍ່ມີກວ່າເປັນມະນຸດ

ເທດສະນັ້ນ ແທນທີ່ຈະຊ່ວຍປະຊາຊົນ ກັບມາພາກັນເຮັດນາໃສ່ຫລັງປະຊາຊົນ

(ຄ) ຣັຖບານຂອງກະສັດເຈົ້າ ຄມນ ລາວແດງໄດ້ປົກຄອງຢ່າງຫລອກລວງ ບໍ່ຊື່ຕົງຕໍ່ປະຊາຊົນ ຊາວນາຊາວສວນຜູ້ທຸກຈົນ ມີເປັນຕົ້ນວ່າຫລອກລວງກວ່າ ຈະບຳລຸງການທຳມາຫາກິນຢ່າງນັ້ນຢ່າງນີ້ ແຕ່ຄັ້ນຄອ່ຍໆຢັງໄປຫາບໍ່ມີທຳຈິງຈັງ ບໍ່ໜ້າຊ້ຳຍັງກ່າວໝິ່ນປະໝາດ ປຊຊ ຊາວບ້ານຜູ້ມີບຸນຄຸນເສັຽພາສີອາກອນໃຫ້ພວກເຈົ້າ ພວກ ຄມນ ໄດ້ກິນໄດ້ຊະແຕກຢ່າງມີຄວາມສຸກສະບາຍ ວ່າປະຊາຊົນ ຍັງມີສຽງທາງການເມືອງກັບຄົນພັກເຂົາບໍ່ໄດ້ ເພາະປະຊາຣຊົນທຸກຈົນແລະຫ່າງໄກຈາກເມືອງຫລວງວຽງຈັນ ໂງ່(ຂີດເສັ້ນໄຕ້ເນັ້ນໂດຍຜູ້ຂຽນວ່າ) ຄຳເວົ້າຂອງຣັຖບານເຊັ່ນນີ້ໄຊ້ບໍ່ໄດ້ ຖ້າປະຊາຊົນໂງ່ ເຈົ້າ ຄມນ ລາວແດງກໍ່ໂງ່ເພາະເປັນຄົນຊາດດຽວກັນ ທີ່ປະຊາຊົນຮູ້ບໍ່ເຖິງເຈົ້ານັ້ນ ເປັນເພາະຂາດການສຶກສາຂາດການມີອິສຣະພາບໃນການປາກເວົ້າ ທີ່ພວກເຈົ້າ ຄມນ ລາວແດງປົກປິດໃວ້ບໍ່ໃຫ້ຮຽນຮູ້ບໍ່ໃຫ້ອອກແນວຄິດຫລາກຫລາຍເຕັມທີ ເພາະຢ້ານວ່າເມື່ອຊາວບ້ານແລະປະຊາຣາສດອນໄດ້ມີການສຶກສາດີ ກໍ່ຈະຮູ້ຄວາມຊົ່ວຮ້າຍທີ່ພວກເຈົ້າ ຄມນ ທຳໃວ້ຕຣອດເວລາມາຈົ່ນເຖິງ-34-ປີຜ່ານມາ ແລະປະຊາຊົນຄົງຈະບໍ່ຍອມໃຫ້ເຈົ້າເຮັດນາໃສ່ຫລັງຄົນອີກຕໍ່ໄປໄດ້

(ງ) ປະເທດເຮົານີ້ເປັນຂອງປະຊາຊົນ ບໍ່ແມ່ນຂອງກະສັດ ຄມນ ລາວແດງ ຕາມທີ່ເຂົາຫລອກລວງແຕ່ຢ່າງໃດ ບັນພຣະບຸຣຸດຂອງປະຊາຣາສດອນທຸກຄົນເປັນຜູ້ຊ່ວຍກັນກູ້ ໃຫ້ປະເທດເປັນອິສຣະພາບ ພົ້ນມືຈາກຂ້າເສິກພວກເຈົ້າ ຄມນ ລາວອ້າຍນອ້ງມີແຕ່ຈັບມືກັນເປັນກຸ່ມແລະກວດຊັບສິນບັດເຂົ້າໃວ້ກອ້ງໂຕະຂອງພັກຂອງພວກເຂົາຫລາຍຮອ້ຍລ້ານໂດລາ ເງິນເຫລົ່ານີ້ເອົາມາຈາກໃສ? ກໍ່ເອົາມາຈາກປະຊາຊົນ ຣາສດອນຜູ້ທຸກຍາກຜູ້ຫາເຊົ້າກິນຄ່ຳ ເພາະວິທີເຮັດນາໃສຫລັງຄົນນັ້ນເອງ

(ຈ) ບ້ານເມືອງກຳລັງອັຕຄັດຝືດເຄືອງ ຊາວນາແລະພໍ່ແມ່ທະຫານຕອ້ງຖິ້ມນາ ເພາະເຮັດນາບໍ່ໄດ້ຜົນ ຊາວໜຸ່ມລາວທັງຍິງທັງຊາຍເກືອບເປັນລ້ານໆຄົນ ຕອ້ງໄປຊອກຫາງານທີ່ຕ່າງປະເທດເພາະຣັຖບານບໍ່ຊອກຫາວຽກງານໃຫ້ຊາວບ້ານທຳ ຣັຖບານໄລ່ຄົນງານອອກຢ່າງເດັດຂາດ ນັກຮຽນທີ່ຮຽນສຳເຣັດແລ້ວແລະທະຫານທີ່ເບີດກະສຽນແລ້ວກໍ່ບໍ່ມີງານທຳ ຈະຕອ້ງອຶດຢາກໄປຕາມຍະຖາກັມເລື້ອງເຫລົ່ານີ້ເປັນຜົນຂອງກະສັດພັກ ຄມນ ເໜືອກົດໝາຍ ສົມຄວນເອົາເງິນທີ່ພວກເຈົ້າ ຄມນ ລາວແດງກວດຢຶດຊັບທີ່ລວບລວມຂອງປະຊາຊົນໃວ້ນັ້ນ ເອົາມາຈັດບຳຣຸງບ້ານເມືອງໃຫ້ມີງານທຳ ຈຶ່ງຈະສົມຄວນທີ່ສນອງຊາວບ້ານທີ່ໄດ້ເສັຽພາສີອາກອນໃຫ້ພວກເຈົ້າ ຄມນ ລາວແດງໄດ້ລ່ຳລວຍມານານແລ້ວນັ້ນ ແຕ່ພວກເຈົ້າ ຄມນ ລາວແດງກໍ່ບໍ່ໄດ້ເຮັດອັນໃດໄດ້ພົ້ນຄົງມີແຕ່ດູດເລືອດກັນເຣື້ອຍໄປເງິນ ທີ່ເຫລືອເທົ່າໃດພວກມັນກໍ່ເອົາໄປຝາກຕ່າງປະເທດໃວ້ຄອຍຕຽມໜີ ແຕ່ເມື່ອບ້ານເມືອງຊຸບໂຊມແລ້ວພວກມັນກໍ່ປ່ອຍໃຫ້ປະຊາຊົນອຶດຢາກ ນັກການເມືອງເຫລົ່ານີ້ມັນຊົ່ວຮ້າຍຫລາຍ

(ສ) ຄນະລາວພັດຖິ່ນຕ່າງແດນ ເຫັນວ່າການທີ່ຈະແກ້ຄວາມຊົ່ວຮ້າຍນີ້ໄດ້ ກໍ່ໂດຍທີ່ຈະຕອ້ງຈັດການປົກຄອງໂດຍມີສະພາມາຈາກການເລືອກຕັ້ງ (ບໍ່ວ່າກັນ) ຖ້າມີຫລາຍພັກການເມືອງຈະໄດ້ຊອ່ຍ

ກັນປຶກສາຫາລືກັນໃຫ້ມີຫລາຍໆຄວາມຄິດ ດີກວ່າຄວາມຄິດດຽວ ສ່ວນຜູ້ເປັນຜູ້ນຳຂອງປະເທດນັ້ນ ຈະຕ້ອງຢູ່ໄຕ້ກົດໝາຍຣັຖທັມມູນ ການປົກຄອງແຜ່ນດິນຈະທຳອັນໃດໂດຍລຳພັງບໍ່ໄດ້ ນອກຈາກ ດ້ວຍຄວາມເຫັນຊອບຂອງສະພາຜູ້ແທນຣາສດອນ ( ໝາຍຄວາມໂດຍຂອງຜູ້ຂຽນ ) ແລະກໍ່ເປັນ ການຈຳເປັນທີ່ປະເທດ ຈະຕ້ອງມີການປົກຄອງແບບຢ່າງປະຊາທິປະໄຕອັນແທ້ຈິງ

ເຫດຜົນ ຂອງຜູ້ທີ່ຂຽນສລຸບເປັນຂໍ້ໆ-6-ຂໍ້ ດັ່ງກ່າວ ຄືຄວາມບໍ່ເປັນທັມ=ໃນສາຍຕາຂອງຊາວ ໄຮ່ຊາວນາແລະຜູ້ຍາກຈົນກວ່ານັ້ນ ທີ່ ສປປລ ແລະປະຊາຊົນລາວພັດຖິ່ນຕ່າງແດນ ທີ່ເຫັນດ້ວຍ ກັບການປ່ຽນແປງການປົກຄອງ=ທີ່ມີຮາກຖານມາຈາກໂຄງສ້າງອຳນາດຕັດສິນໃຈ ຂອງຄົນພຽງ ຄົນດຽວຊຶ່ງສະຖານະ ຂອງກະສັດພັກເຈົ້າພັກໂທນພັກດຽວ ທີ່ຢູ່ເໜືອກົດໝາຍນັ້ນບໍ່ຕ້ອງນຳມາໄຊ້

2 ສັນຍາປະຊາຄົມ-6-ປະການ-ພັນທະສັນຍາເພື່ອສັງຄົມທີ່ເປັນທັມ ຄື

(1) ຈະຕ້ອງຮັກສາຄວາມເປັນເອກຣາຊທັງຫລາຍ ເຊັ່ນເອກຣາຊໃນທາງການເມືອງ ໃນທາງ ສາສນາໃນ ທາງສຖກິດ ຂອງປະເທດໃວ້ໃຫ້ໝັ້ນຄົງ

(2) ຈະຕ້ອງຮັກສາຄວາມປອດພັຍພາຍໃນປະເທດ ເຫດການປະທຸສະຣາຍຕໍ່ຄົນໃຫ້ລົດນ້ອຍລົງ

(3) ຕ້ອງການບຳລຸງຄວາມສຸກສົມບູນຂອງປະຊາຊົນໃນທາງເສຖກິດ ໂດຍຣັຖບານໃໝ່ຈະຈັດຫາງານ ໃຫ້ປະຊາຊົນທຸກຄົນໄດ້ທຳ ຈະວາງໂຄງການເສຖກິດແຫ່ງຊາດ ບໍ່ປ່ອຍໃຫ້ຊາວບ້ານອຶດຢາກ ແຕກ ອອກນອກໄປທາງຕ່າງປະເທດເຊັ່ນ ຄມນ ລາວແດງນີ້

(4) ຈະຕ້ອງໃຫ້ຣາສດອນມີສິດທິສເມີພາບກັນ-ບໍ່ໃຫ້ຄືພວກເຈົ້າແດງພວກຄົນພັກມີສິດທິຫລາຍກວ່າ ຊາວບ້ານ ເຊັ່ນທີ່ເປັນຢູ່ໃນເວລານີ້

(5) ຈະຕ້ອງໃຫ້ມີເສຣີພາບ ມີຄວາມເປັນອິສຣະໃນການປາກເວົ້າ ໃນການເດີນຂບວນ ໃນການຕັ້ງ ພັກການເມືອງ ເມື່ອເສຣີພາບນີ້ບໍ່ຂັດຕໍ່ຫລັກ-4-ປະການ ດັ່ງກ່າວຂ້າງຕົ້ນ

(6) ຈະຕ້ອງໃຫ້ການສຶກສາຢ່າງເຕມທີແກ່ປະຊາຊົນ ໂດຍບໍ່ຕ້ອງຈຳເປັນຈະຈ່າຍຄ່າທີ່ນັ່ງໃນໂຮງ ຮຽນ ເຊັ່ນດຽວກັນກັບການປິ່ນປົວທີ່ໂຮງພະຍາບານພັກ ຊາວບ້ານຍາກຈົນຈະຕ້ອງເຂົ້າປົວໄດ້ຟີ ທຸກໆຄົນ ສິ່ງນີ້ໃນຣະບອບເກົ່າເຂົາໃຫ້ຄວາມເປັນທັມແກ່ທຸກຄົນທີ່ຍາກຈົນ ສົມຄວນຍົກຍອ້ງທີ່ສຸດ

(7) ຈະຕ້ອງວາງມື ກັບການຄອບຄອງຊີ່ພັກຢ່າງຂຶ້ນເຊີງ ເມື່ອຊື່ຕຶກໃນກຳມືຂອງເຈົ້າພັກ ແນ່ນອນ ການລາຍງານຄວາມຈິງສູ່ຊາວບ້ານ ຈຶ່ງບໍ່ເກີດມີຂຶ້ນໄດ້ເດັດຂາດ

(8) ຈະຕ້ອງປ່ອຍໃຫ້ລາວພັດຖິ່ນຕ່າງແດນ ມີສິດກັບປະເທດ ໂດຍບໍ່ຈຳເປັນຈະຈຳແນກລາວນອກ ລາວໃນ ໃຫ້ຄວາມຄຸ້ມຄອງປອດພັຍໃນການຕາຍ ບໍ່ໃຫ້ເປັນຄືທ່ານລົມສຫວາດ ຊະນະນິກອນ ຄວນເປັນບົດຮຽນອັນຊົ່ວຊ້າປ່າເທື່ອນຄັ້ງສຸດທ້າຍ

(9) ຈະຕ້ອງຈັດການເລືອກຕັ້ງ ປະກອບດ້ວຍຫລາຍພັກການເມືອງ ພັກເຈົ້າ ຄມນ ລາວແດງ ຄວນຖິ້ມ ເພາະພັກນີ້ເປັນການຜູກຂາດອຳນາດຜເດັດການຢ່າງຂຶ້ນເຊີງ

(10) ຈະຕ້ອງເປີດເຜີຍຕົວເລກທີ່ແນ່ນອນ ວ່າແຕ່ປີ-1975-ຮອດດຽວນີ້ ພັກເຈົ້າ ຄມນ ອ້າຍນ້ອງ ຂ້າຊາວລາວຝ່າຍຂວາທັງຄົນພັກຕົນເອງ ແລະຊາວມົ້ງມີຈຳນວນເທົ່າໃດ ແລະແມ່ນໃຜຕ້ອງຮັບຜິດ ຊອບກັບສິ່ງນີ້ ແມ່ນຄຳໄຕ ສີພັນດອນ ບໍ່ ຫຼື ຄຳອ້ວນບຸບຜາ ບໍ່ ເພາະພວກນີ້ແມ່ນພວກຜເດັດຂ້າ ຄົນລາວທັງຊົ່ວແລະທັງດີ

(11) ຈະຕ້ອງລາຍງານຕາມຕົວເລກແທ້ໆ ວ່າຕຣອດເວລາ-34-ປີຜ່ານມານີ້ ພວກລາວນອກຝາກ ເງິນກັບເມືອປະເທດ ໃຫ້ພໍ່ແມ່ເຂົາເຈົ້າແລ້ວມີຈຳນວນເທົ່າໃດ ລາວນອກມີບາງຄົນເຂົາບອກວ່າ ມີ ເກືອບຮອ້ຍ ສາມມື່ນລ້ານ ໂດລາ ແມ່ນແທ້ຫຼືບໍ່ພັກ ຄມນ ລາວແດງເລີຍ

(12) ຈະຕ້ອງປາບປາມຄົນພັກສໍ້ໂກງ ແລະໃຫ້ເອົາມາລົງໂທດ ຄື ປທຈ ແລະ ວຽດນາມ ເຂົາເຮັດ ມາແລ້ວຢ່າງໄດ້ຜົນ ຫຼື ຢ່າງນອ້ຍຕອ້ງໄລ່ອອກຈາກພັກ ຫຼື ໜ້າທີ່ການເປັນຕົວຢ່າງແກ່ປວງຊົນ

(13) ຈະຕອ້ງເປີດເຜີຍວ່າ ການໄຊ້ກຳລັງທຳລາຍລົບລ້າງຣາຊວົງລາວ ເປັນສິ່ງທີ່ຜິດພາດທີ່ສຸດໃນ ປະວັດສາດລາວໃໝ່ ແລະຕອ້ງຂໍໂທດນຳຄອບຄົວຂອງພຣະອົງທີ່ຝຣັ່ງເສສແລະທີ່ການາດາ

(14) ຈະຕອ້ງໄຊ້ໃນການຍຶດບ້ານເຮືອນຂອງຝ່າຍຂວາ ຫຼືຂອງປະຊາຊົນ ໃນປີ-1975- ຄືນໃຫ້ຢ່າງເປັນທັມທີ່ສຸດ

(15) ຈະຕອ້ງຖີ້ມການເມືອງ ທີ່ໄຊ້ຄວາມຮຸນແຮງກັບຝ່າຍຕົງກັນຂ້າມ ການຂ້າຄົນລາວໃນປະເທດ ໄທເກືອບຮອດ-40-ກວ່າຄົນ ຈະຕອ້ງບໍ່ໃຫ້ເກີດຂຶ້ນອີກແລະພວກທີ່ມີຊື່ໃນບັນຊີສີດຳ ຈົ່ງງົດເຊົາ ໃນການຕາມລ້າພວກເຂົາເຈົ້າ ບໍ່ໃຫ້ທຳເໝືອນພວກເສື້ອສີແດງຂອງຄົນໜ້າຫ່ລຽມ

(16) ຈະຕອ້ງບໍ່ເຂົ້າມາແຊກແຊງສື່ ໄປຕ້ານ ວິທະຍຸ ສຽງ ອະເມຣິກາ ເອເຊັຽເສຣີ ອະເມຣິກາລາວ ທີ່ປາຣີ

(17) ຈະຕອ້ງເຊົາກັບການໄຊ້ ວັດວາອາຮາມລາວໃນຕ່າງແດນ ເປັນບອ່ນທີ່ໂຄສະນາຊວນເຊື່ອ ເພື່ອແບ່ງແຍກລາວອອກ ເປັນສອງກຸ່ມສອງພວກ

3ຸ ບົດສຣຸບຂອງການປະກາດ ຄນະລາວພັດຖິ່ນ ສບັບທີ-1-

ປະເທດຈະມີຄວາມເປັນເອກຣາຊຢ່າງພອ້ມບໍຣິບູນ ປະຊາຊົນ ຈະໄດ້ຮັບຄວາມປອດພັຍ ທຸກ ຄົນຈະຕອ້ງມີງານທຳບໍ່ຕອ້ງອຶດຕາຍ ທຸກຄົນຈະມີສິດທິສເມີພາບກັນ ແລະມີເສຣີພາບ ພົນຈາກ ການເປັນໄພຂອງພັກເປັນຂ້າທາດຂອງພັກ ເປັນທາດພວກເຈົ້າ ຄມນ ຜດກ ອ້າຍນອ້ງ ມັນໝົດ ສມັຍທີ່ເຈົ້າຈະເຮັດນາໃສ່ຫລັງປະຊາຊົນ ສິ່ງທີ່ທຸກຄົນເພິ່ງປຣາຖນາຄື ຄວາມສຸກຄວາມຈະເຣີນ ຢ່າງເສຣີ ຊຶ່ງຮຽກເປັນສັບ ວ່າ ສີອາຣິຍະນັ້ນ ກໍ່ຈະພວມບັງເກີດຂຶ້ນແກ່ປະຊາຊົນ ຖ້ວນໜ້າ

ອຸດົມການຮວ່ມກັນແລະກ່າວຕໍ່ໄປ ມີດັ່ງນີ້

- ອຸດົມການຮວ່ມກັນ ຂອງສັງຄົມລາວໃນການຕໍ່ສູ້ເພື່ອປະຊາທິປະໄຕຈະຕອ້ງມີ ຮາກ ມາຈາກ ເຈຕນາຣົມຂອງການປ່ຽນແປງການປົກຄອງ

ຄື ປະຊາທິປະໄຕທີ່ມີປະມຸຂເຈົ້າລາວແດງຂອງປະເທດ ຕອ້ງຢູ່ໄຕ້ກົດໝາຍຣັຖທັມມູນການປົກຄອງແຜ່ນດິນ ຈະທຳອັນໃດໂດຍລຳພັງບໍ່ໄດ້ ນອກຈາກດວ້ຍຄວາມເຫັນຊອບຂອງສະພາຜູ້ແທນຣາສດອນທີ່ເລືອກ ໂດຍກົງມາຈາກປະຊາຊົນ

ໃນການປົກຄອງ-ຊາດສານເຈົ້າ ກະສັດພັກໂທນ ຈະຕອ້ງໃຫ້ຊັດເຈນວ່າ ຊາດຄືປະຊາຊົນ ທີ່ເປັນເຈົ້າອຳນາດອະທິປະໄຕ ສານ ແລະກະສັດ ຄມນ ລາວແດງ ດຳຣົງຢູ່ໄດ້ດວ້ຍສັດທາແລະສັນທະມະຕິຂອງປະຊາຊົນບົນຫລັກການທີ່ວ່າ ສະຖາບັນໃດໆກໍ່ຕາມຈະຢູ່ຄວບຄູ່ໄປກັບສັງຄົມຢ່າງເໝາະສົມກັບສມັຍ ຕອ້ງປົ່ງໃສແລະຕຣວດສອບໄດ້

ກ້າວຕໍ່ໄປຂອງສັງຄົມລາວທີ່ມີ ອຸດົມການຮວ່ມກັນດັ່ງກ່າວ ບໍ່ໄຊ້ການຕໍ່ສູ້ເພື່ອລົ້ມອຳນາດຍາທິປະໄຕ ຄມນ ລາວແດງ ບໍ່ໄຊ້ການຕໍ່ສູ້ເພື່ອລົ້ມສັງຄົມ ມີເບື້ອງໜຶ່ງຊຸທົນນິຍົມສາມານແລະອີກມືຍິ່ງຕັດທົວສືບທອດການເມືອງ ຜດກ ເພາະມັນເປັນພຽງປຣິສາດທີ່ມີອິດທິພົນ ຫລອກຫລອນເຮົາຢູ່ໄດ້ໂດຍອາໃສການດູດພລັງຫລັບໃຫລໄປຈາກເຮົາ ເພາະເຮົາຕ່າງຍິນຍອມຕໍ່ອຳນາດຂອງມັນ ດວ້ຍມົວແຕ່ຫລັບໃຫລບໍ່ນຳພາສັນຍາປະຊາຄົມໃນ-17-ປະການ ອັນເປັນພັນທະສັນຍາແຣກເຣີ້ມກໍ່ຣ້າງສ້າງ ສັງຄົມປະຊາທິປະໄຕ ທີ່ປະຊາຊາດເຈົ້າຂອງອຳນາດທີ່ແທ້ຈິງ ຈະຕອ້ງຮວ່ມກັນທຳພັນທະສັນຍານັ້ນ ໃຫ້ເປັນຈິງດວ້ຍສມອງແລະສອງຕີນສອງມືຂອງຕົນເອງ ບາດກ້າວຕໍ່ໄປນັ້ນ ແມ່ນບາດກ້າວກັບເພື່ອເດີນທາງຕໍ່ ບາດກ້າວກັບໄປສູ່ຈຸດເດີ້ມຕົ້ນ ອຸດົມການປະຊາທິປະໄຕແລະສັນຍາປະຊາຄົມ ແລ້ວເດີນທາງຕໍ່ດວ້ຍການຮວ່ມກັນ ສ້າງພລັງທາງສັງຄົມຂັບເຄື່ອນການອອກແບບໂຄງສ້າງສັງຄົມປະຊາທິປະໄຕ ທີ່ປະຊາຊົນທຸກຄົນມີສິດທິສເມີພາບຢ່າງແທ້ຈິງ ມີຄຸນນະພາບຊີວິດທີ່ດີ ມີສວັດດີພາບ ມີສັກສີ ແລະຢູ່ຮວ່ມກັນພາຍໄຕ້ກະຕິກາທີ່ເປັນທັມ

ນະຄອນວຽງຈັນ ວັນທີ-18-7-09-

ສ ຫ ກົມມະແສງ